

ລາຍລະອຽດດ່ວນກ່ຽວກັບການຈ່າຍຄ່າ ໃຫ້ຍ້ອນຂາດງານໄປຊ່ວຍຄອບຄົວ.

- ມີການຈ່າຍຄ່າ ແຕ່ບໍ່ຮັບຮອງວ່າຈະໄດ້ເຮັດ ວຽກເໝືອນເດີມ
- ມີການຈ່າຍ ຫຼື ຕອບແທນຍ້ອນໄດ້ຊ່ວຍ ພວກສະມາຊິກອາສັຍຢູ່ນຳ ພໍ່ແມ່, ລູກ, ຜົວ, ເມັຽ, ຫຼື ເດັກເກີດໃໝ່
- ຕ້ອງຈ່າຍໃຫ້ພະນັກງານທີ່ມີປະກັນພັຍ SDI (ຫຼືຈ່າພວກມີການຕັດເງິນໄປໃສ່ SDI)
- ພາຍໃນ ສິບສອງເດືອນຈະມີສິດໄດ້ຮັບຈ່າຍຄ່າດົນເຖິງ ຫົກອາທິດ
- ສາມາດຊ່ວຍໄດ້ປະມານ ຫ້າສິບຫ້າ ສ່ວນຮ້ອຍຂອງ ລາຍໄດ້
- ການຕັດເງິນເລີ້ມຕັດແຕ່ເດືອນ ມົກກະຮາ ວັນທີ່ 1, ປີ 2004
- ຜູ້ທີ່ສົມຄວນຈະໄດ້ຮັບຈ່າຍຄ່າຕອບແທນ ແມ່ນເລີ້ມແຕ່ເດືອນ ກໍຣະກະດາ ວັນທີ່ 1, ປີ 2004
- ຢູ່ພາຍໃຕ້ການດູແລຈາກ ກູ່ມແຮງງານຂອງ (Employment Development Department)

ຢູ່ຮັຖ ກາລີຟໍເນັຽ (California) ມີປະກັນພັຍຈ່າຍຄ່າໃຫ້ອອກໄປຊ່ວຍຄອບຄົວ ເມື່ອຈຳເປັນນີ້ແມ່ນກົດໝາຍ

ມີປະກັນພັຍຈ່າຍຄ່າໃຫ້ຍ້ອນຂາດງານໄປຊ່ວຍຄອບຄົວ.
ເວລາຕ້ອງການເບິ່ງແຍງໃຫ້ໂທ 1-877-BE-THERE
ເພື່ອລາຍລະອຽດ, ເຊີນເບິ່ງ:
www.edd.ca.gov

1-877-BE-THERE (ພາສາ ອັງກິດ)
1-800-563-2441 (TTY)

EDD ຫຼືອົງການຊອກຫາງານ
ເປັນອົງການບໍຣິຫານງານແບບສະເມີພາບໃຫ້ທຸກໆທ່ານທຽບເທົ່າກັນ
ໂດຍບໍ່ເລືອກໃຜທັງໝົດ.
ຖ້າທ່ານສົນໃຈຫຼືຕ້ອງການໃບຮ້ອງຂໍ່ຕ່າງໆ ຫຼື
ຄຳຮ້ອງຂໍ່ແບບຜິເສດໃຫ້ໂທໄປຫາ 1-877-BE-THERE.

ປື້ມຫົວນີ້ມີລາຍລະອຽດຈຳກັດເທົ່ານັ້ນ
ຈະບໍ່ມີສ່ວນພົວພັນກັບກົດຮະບຽດຫຼືຂໍ່ເງື່ອນໄຂຂອງກົດໝາຍຕ່າງໆ

ຂອງຮັຖ ກາລີຟໍເນັຽ

EDD Employment Development Department
State of California

DE 2511/L/ Rev. 2 (10-04) (INTERNET)



ເວລາຕ້ອງການແມ່ນໃນເມື່ອມີດັ່ງນີ້.

ມີປະກັນພັຍຈ່າຍຄ່າໃຫ້ອອກໄປຊ່ວຍຄອບຄົວ.

ຍ້ອນມີຈ່າຍຄ່າຊ່ວຍຄອບຄົວ ທ່ານສາມາດປະຕິບັດຕາມໃຈ ໃນເມື່ອມີຄວາມຕ້ອງການ

ຊີວິດຂອງພວກທ່າງານທຸກໆ ຄົນນີ້ ມີເວລາໃດ ເວລານຶ່ງ ບຸດຄົນເຫຼົ່ານີ້ຕ້ອງການເວລາອອກໄປຮັກສາເບິ່ງແຍງຜູ້ທີ່ເພີ່ນຮັກເພີ່ນແພງ, ບາງທີອາດຈະແມ່ນ ແມ່ໄປຊ່ວຍລູກຜູ້ຫາກ່ເກີດໃໝ່ໆ, ບາງທີ ກ່ແມ່ນອອກໄປຊ່ວຍ ຫຼືເບິ່ງແຍງ ພໍ່ແມ່, ລູກ, ຜົວ, ເມັຽ, ຫຼືສະມາ ຊີກໃນຄອບຄົວຜູ້ກ່າລັງຖືກເຈັບປ່ວຍໜັກ, ກາລິຟ່ເນັຽ (California) ມີກົດໝາຍໃໝ່ມາຈ່າຍຄ່າຕອບແທນເພື່ອໃຫ້ຜູ້ກ່ຽວໄດ້ມີເວລາອອກໄປຊ່ວຍຄອບຄົວໃນເມື່ອມີການກະທົບກະເທືອນແບບນີ້,

ແຜນການທີ່ມີຜົນປະໂຍດແກ່ທ່ານແລະຄອບຄົວ

ການຈ່າຍຄ່າຊ່ວຍຄອບຄົວແມ່ນຂຶ້ນກັບລາຍໄດ້ປະຈ່ຳແຕ່ລະສີ່ເດືອນຜ່ານມາ ຢ່າງໜ້ອຍ ແມ່ນ ຫ້າສິບດອນ ຫຼາຍສຸດແມ່ນ ເຈັດຮ້ອຍ ຊາວແປດດອນ ຕໍ່ອາທິດ ດົນເຖິງ ຫົກອາທິດເລີ້ມແຕ່ເດືອນ ກ່ຣະກະດາ ວັນທີ່ 1 ປີ 2004 ($50 to a maximum of $728 per week beginning July 1, 2004) ສ່າຫຼັບປີ 2005 ນັ້ນຄ່າຈ່າຍຊ່ວຍຄອບຄົວຈະຂຶ້ນສູງເຖິງ $840 ຕໍ່ອາທິດ,

ການຈ່າຍຄ່າຊ່ວຍຄອບຄົວ ໃຫ້ຄົນງານຂອງຣັກ (ກາລິຟ່ເນັຽ) California

ມີການຈ່າຍຄ່າ ແຕ່ບໍ່ຮັບຮອງວ່າຈະໄດ້ເຮັດວຽກເໝືອນເດີມວຽກການງານຂອງທ່ານອາດຈະຖືກປ້ອງກັນໄວ້ໃຫ້ທ່ານຫາກວ່າສະຖານທີ່ທ່າງານຂອງທ່ານໄດ້ຢູ່ພາຍໃຕ້ການດູແລໄປຕາມກົດຣະບຽດຂອງຈ່າຍຄ່າ ຊ່ວຍຄອບຄົວຂອງຣັຖບານກາງ (Federal Family Medical Leave Act and the California Family Rights Act).
ທ່ານຕ້ອງແຈ້ງສາເຫດຕ່າງໆ ຂອງທ່ານໃຫ້ສະຖານທີ່ທ່າງານ ຕາມເງື່ອນໄຂທຸກໆຂໍ້ ຂອງສະຖານທີ່ທ່າງານຢ່າງລະອຽດຣຽບຮ້ອຍ,

ກ່ອນທ່ານຈະໄດ້ຮັບເງີນຈ່າຍຄ່າຊ່ວຍຄອບຄົວ ທ່ານຕ້ອງປະຕິບັດດັ່ງລຸ່ມນີ້຃

- ຕ້ອງມີປະກັນພັຍຂອງຣັຖ (State Disability Insurance, SDI) (ຫຼືໄດ້ຕັດເງີນເຂົ້າໄປຫາ SDI) ບໍ່ຕ່ຳກ່ວາ $300.
- ປະກອບເອກສານ ທຸກແຜ່ນໃຫ້ຖືກຕ້ອງ, ຮຽບຮ້ອຍ, ຕາມຄວາມຈິງ, ຖືກຕ້ອງຕາມເວລາຢ່າງລະອຽດ,
- ຍື່ນລາຍລະອຽດຕ່າງໆ ກ່ຽວກັບອາການຕ່າງໆຂອງຜູ້ກ່ຽວເພື່ອຢັ້ງຢືນວ່າສົມຄວາມແລ້ວທ່ານຕ້ອງໄດ້ອອກງານໄປຊ່ວຍຄອບຄົວ
- ຊອກຫາເອກສານເພື່ອຢັ້ງຢືນວ່າການຕິດພັນກັບເດັກຜູ້ເກີດໃໝ່ມີຈິງໆ
- ຖ້າວ່າສະຖານທີ່ທ່າງານຂອງທ່ານຕ້ອງການແລ້ວທ່ານ ຈະຕ້ອງໃຊ້ເວລາ ລາພັກຂອງທ່ານ ສອງອາທິດກ່ອນຈະໄດ້ຮັບຄ່າຈ່າຍຊ່ວຍ
- ຕ້ອງຂາດເງີນຫຼືບໍ່ໄດ້ຮັບລາຍໄດ້ເຖິງ ເຈັດວັນ ກ່ອນ 7-day unpaid waiting period

ທ່ານຈະບໍ່ໄດ້ຮັບເງີນຈ່າຍຄ່າຊ່ວຍຄອບຄົວຖ້າວ່າ຃

- ທ່ານໄດ້ຮັບເງີນຈາກ (SDI) ເງີນຕົກງານ, ເງີນພິການຍ້ອນບໍ່ສາມາດເຮັດວຽກໄດ້
- ເວລາທ່ານອອກມາຊ່ວຍຄອບຄົວນັ້ນທ່ານບໍ່ໄດ້ທ່າງານ ຫຼືຍັງບໍ່ທັນມີງານທ່າເທື່ອ
- ທ່ານຍັງມີລາຍໄດ້ຢູ່ຄືເກົ່າ
- ຄວາມຕ້ອງການຊ່ວຍຂອງທ່ານບໍ່ໄດ້ຮັບໃບຢັ້ງຢືນຈາກທ່ານໝໍ ຫຼືສະຖານທີ່ປິນປົວຕ່າງໆ
- ທ່ານກ່າລັງຖືກຄວບຄຸມຢູ່ຍ້ອນວ່າໄດ້ກະທ່າຜິດຕໍ່ກົດໝາຍ

ທ່ານມີສິດໄດ້ຮັບດັ່ງນີ້:

- ຊາບ ຫຼື ຮູ້ເຖິງລາຍລະອຽດ ຫຼືສາເຫດຕ່າງໆ ທີ່ມີສ່ວນພົວພັນກັບການຕັດສິນໃຈຫຼືຜົນປະໂຍດທີ່ທ່ານສົມຄວາມຈະໄດ້ຮັບ
- ມີສິດອຸທອນກັນກ່ຽວກັບການຕັດສິນວ່າຄວນຈະໄດ້ຮັບຫຼືບໍ່ໄດ້ຮັບຄ່າຊ່ວຍຄອບຄົວຈາກກຸມແຮງງານຂອງຣັຖ (California Unemployment Insurance Appeal Board administrative law judge)
- ສິດສ່ວນຕົວແລະລາຍລະອຽດຕ່າງໆ ກ່ຽວກັບທ່ານເອັງແມ່ນ ຈະໄດ້ຮັກສາໄວ້ບໍ່ໃຫ້ຜູ້ໃດຮູ້ນອກຈາກວ່າຈະເປັນພາ ຣະກິດ ຂອງກົດໝາຍເທົ່ານັ້ນ

ກົດໝາຍຜິເສດສ່າຫຼັບເວລາຜິເສດເທົ່ານັ້ນ

ປະກັນພັຍຈ່າຍຄ່າອອກງານໄປຊ່ວຍຄອບຄົວນີ້ ແມ່ນຣັຖ ກາລິຟ່ເນັຽ ເທົ່ານັ້ນຈິ່ງມີ, ຣັຖອື່ນໆ ຍັງບໍ່ທັນມີເທື່ອ ຣັຖ ກາລິຟ່ເນັຽ ມີກ່ຍ້ອນວ່າຄົນງານກ່ມີມາກມາຍກາຍກອງຂຶ້ນມາ ພ້ອມເວລາດຽວກັນນັ້ນຄວາມຕ້ອງການຜູ້ຊ່ວຍຢູ່ໃນເຮືອນຊານບ້ານຊອງກ່ທະວີຂຶ້ນຢ່າງວ່ອງໄວ, ດ້ວຍເຫດນີ້ກົດໝາຍນີ້ຈິ່ງໄດ້ແຕ່ງຕັ້ງຂຶ້ນມາເພື່ອຜົນປະໂຍດຂອງຄອບຄົວແລະວຽກການງານໃຫ້ມີຄວາມກ້າວໜ້າ,ຖ້າທ່ານມີ ຄ່າຖາມ ຫຼື ຢາກຊາບກ່ຽວກັບຜົນປະໂຍດເຫຼົ່ານີ້ເຊີນໂທມາຫາພວກເຮົາໃນວັນນີ້,

1-877-BE-THERE (ພາສາ ອັງກິດ)
1-800-563-2441 (TTY)

P.O. Box 997017
Sacramento, CA 95799-7017

www.edd.ca.gov/eddmail.htm